**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ
ແກ້ໄຂການລະບາດຂອງພະຍາດໂຄວິດ-19

ເລກທີ 0337 /ອຄ.ກອຫ
ນະຄອນຫຼວງວຽງຈັນ, ວັນທີ 06 ພຶດສະພາ 2021

# ແຈ້ງການ

**ເຖິງ:** - ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.
- ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ.
- ຜູ້ອຳນວຍການໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ໃນໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

- ອີງຕາມຄຳສັ່ງວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021.
- ອີງຕາມແຈ້ງການທິດຊີ້ນຳກ່ຽວກັບການສືບຕໍ່ຈັດຕັ້ງປະຕິບັດ ຄຳສັ່ງເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 462/ຫສນຍ, ລົງວັນທີ 5 ພຶດສະພາ 2021.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:**

1. ໃຫ້ສືບຕໍ່ເຜີຍແຜ່, ແນະນຳ ແລະ ເພີ່ມທະວີການປະຕິບັດບັນດາມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ຕາມຄຳສັ່ງເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ແລະ ແຈ້ງການທີ່ຄະນະສະເພາະກິດວາງອອກ ຢ່າງເຂັ້ມງວດ.
2. ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທຸກຂະໜາດ ແລະ ທຸກປະເພດ ທີ່ມີຄວາມຈຳເປັນເປີດດຳເນີນກິດຈະການໂຮງງານ ສາມາດດຳເນີນໄດ້ ແຕ່ຕ້ອງປະຕິບັດຕາມມາດຕະການທີ່ຄະນະສະເພາະກິດຂັ້ນສູນກາງວາງອອກ ຢ່າງເຂັ້ມງວດ ດັ່ງນີ້:
   - 2.1 ໃຫ້ສ້າງແຜນກຳນົດມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ຢູ່ໃນໂຮງງານ, ຈັດຕັ້ງປະຕິບັດ ແລະ ລາຍງານຂະແໜງອຸດສາຫະກຳ ແລະ ການຄ້າ ເປັນປະຈຳ;
   - 2.2 ໃຫ້ຫຼຸດຈຳນວນພະນັກງານ ແລະ ກຳມະກອນລົງ ເພື່ອຮັກສາໄລຍະຫ່າງຂອງການເຮັດວຽກ ແລະ ຄວາມແອອັດ ໂດຍຈັດເປັນຫຼາຍຜຽນວຽກ ຫຼື ກ່າການເຮັດວຽກ;
   - 2.3 ຕ້ອງກວດວັດແທກອຸນຫະພູມພະນັກງານ, ກຳມະກອນ ຢູ່ປະຕູທາງເຂົ້າ-ອອກໂຮງງານ, ຫ້ອງການ ແລະ ສະຖານທີ່ເຮັດວຽກ ເປັນປະຈຳ. ກໍລະນີພົບເຫັນຜູ້ມີອາການໄຂ້ (ອຸນຫະພູມຮ່າງກາຍສູງກວ່າ 37,5 ອົງສາ

(ຊ), ໄອ, ຈາມ, ຫາຍໃຈຍາກ ຫຼື ມີອາການສົງໄສວ່າເປັນພະຍາດໂຄວິດ-19 ຕ້ອງສົ່ງເຂົ້າຫ້ອງແຍກປ່ຽວຂອງໂຮງງານ ແລ້ວໂທປຶກສາສາຍດ່ວນ 165, 166 ແລະ ພົວພັນໃຫ້ແພດໝໍເຂົ້າກວດທັນທີ;

2.4 ຕ້ອງຮັກສາໄລຍະຫ່າງ 1 ແມັດ ຂຶ້ນໄປ ຢູ່ສະຖານທີ່ເຮັດວຽກ, ຫ້ອງອາຫານ ແລະ ບ່ອນພັກເຊົາຂອງໂຮງງານ. ໝາຍສັນຍາລັກເພື່ອກຳນົດການຮັກສາໄລະຍະຫ່າງ, ຖ້າບໍ່ສາມາດປະຕິບັດການຮັກສາໄລຍະຫ່າງ 1 ແມັດໄດ້ ຕ້ອງມີແນວຂັ້ນລະຫວ່າງບຸກຄົນຕໍ່ບຸກຄົນ;

2.5 ຕ້ອງໃສ່ຜ້າປິດປາກ-ດັງ ທຸກຄັ້ງ ໃນເວລາຢູ່ສະຖານທີ່ເຮັດວຽກ ແລະ ສະຖານທີ່ທີ່ມີຄົນຈຳນວນຫຼາຍ;

2.6 ຕ້ອງມີນ້ຳດື່ມສະອາດ, ມີບ່ອນລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ເຈວລ້າງມື ຖືກຕາມຫຼັກການອະນາໄມ;

2.7 ໃຫ້ອະນາໄມ ແລະ ຂ້າເຊື້ອ ອຸປະກອນ, ສິ່ງຂອງທີ່ມີການສຳຜັດເລື້ອຍໆ ແລະ ສະຖານທີ່ພາຍໃນໂຮງງານ;

2.8 ຫ້າມເຮັດກິດຈະກຳຊຸມແຊວ ຫຼື ພົວພັນແບບໃກ້ຊິດທີ່ບໍ່ສາມາດຮັກສາໄລຍະຫ່າງ ຫຼື ກິດຈະກຳອື່ນໆ ທີ່ມີຄວາມສ່ຽງຕໍ່ການຕິດເຊື້ອ.

3. ໃຫ້ຊຸກຍູ້ພະນັກງານ ແລະ ກຳມະກອນ ທີ່ເຮັດວຽກຢູ່ໃນໂຮງງານ ໄປສັກຢາວັກຊີນປ້ອງກັນພະຍາດໂຄວິດ-19.
4. ໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ ຢ່າງເຂັ້ມງວດ.
5. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດ ແຈ້ງການສະບັບນີ້ ແລ້ວສົ່ງມາຍັງກົມອຸດສາຫະກຳ ແລະ ຫັດຖະກຳ ເປັນແຕ່ລະໄລຍະ ເພື່ອສືບຕໍ່ລາຍງານກະຊວງ ແລະ ລັດຖະບານ.
6. ແຈ້ງການສະບັບນີ້ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນແຈ້ງການ ສະບັບເລກທີ 0310/ອຄ.ກອຫ, ລົງວັນທີ 23 ເມສາ 2021, ສະບັບເລກທີ 0324/ອຄ.ກອຫ, ລົງວັນທີ 26 ເມສາ 2021 ແລະ ສະບັບເລກທີ 0323/ອຄ.ກອຫ, ລົງວັນທີ 26 ເມສາ 2021.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

**ຮອງລັດຖະມົນຕີ**

**ຫົວໜ້າຄະນະສະເພາະກິດ**

ກະຊວງອຸດສາຫະກຳແລະການຄ້າ

ລັດຖະມົນຕີ

**ສົມຈິດ ອິນທະມິດ**